*ເຈ້ຍຂໍ້ມູນກ່ຽວກັບພະຍາດຕິດຕໍ່*

*ໂຣກໄອໄກ່ສາມາດເປັນໄດ້ກັບຄົນທຸກວັຍ, ແຕ່ວ່າມັນອາດຮ້າຍແຮງໄດ້ຖ້າເປັນ ກັບ ແອນ້ອຍ. ໂຣກນີ້ສາມາດປ້ອງກັນໄດ້ ໂດຍການສັກຢາ ເມື່ອອາຍຸໄດ້ ສອງເດືອນ, ສີ່ເດືອນແລະຫົກເດືອນ. ຕ້ອງໄດ້ສັກຕື່ມ ອີກເມື່ອອາຍຸໄດ້ ສີ່ປີ ແລະ ເມື່ອຍ່າງເຂົ້າ ສູ່ວັຍລຸ້ນ, ຫຼືສຳລັບຜູ້ໃຫຍ່ທີ່ຢູ່ໃນເຮືອນ ຊຶ່ງມີ ເດັກນ້ອຍຫຼື ສຳລັບຜູ້ທີ່ເຮັດວຽກກັບ ເດັກນ້ອຍ.*

# ໂຣກໄອໄກ່ (ໄອຫອບ)

## ໂຣກໄອໄກ່ແມ່ນຫຍັງ?

ໂຣກໄອໄກ່ (ຫຼື ໄອຫອບ) ແມ່ນພະຍາດທີ່ເກີດຂຶ້ນຍ້ອນການຕິດເຊື້ອແບັກທີເຣັຍທີ່ເອີ້ນວ່າ *Bordetella pertussis* ໃນຮູຄໍ.

## ໂຣກນີ້ມີອາການຫຍັງແດ່?

- ໂຣກໄອໄກ່ຕາມປົກກະຕິຈະເລີ້ມອາການຄ້າຍກັບວ່າເປັນຫວັດ, ມີຂີ້ມູກຍ້ອຍ, ອ່ອນເພັຍ ແລະ ບາງເທື່ອກໍມີໄຂ້ປານກາງ:
- ຈາກນັ້ນກໍຈະເລີ້ມໄອ, ສ່ວນຫຼາຍຈະໄອເປັນຊຸດ, ຕິດຕາມດ້ວຍການຫາຍໃຈເລິກ (ຫຼື "ຫອບ"). ບາງເທື່ອ ຜູ້ເປັນອາດຈະຮາກຫຼັງຈາກໄອ.
- ໂຣກໄອໄກ່ອາດຮ້າຍແຮງຫຼາຍສຳລັບເດັກອາຍຸນ້ອຍ. ເຂົາເຈົ້າອາດປ່ຽນເປັນສີແຫຼ້ ຫຼື ຢຸດຫາຍໃຈໃນລະຫວ່າງທີ່ໄອຂຶ້ນ ແລະ ອາດຈະຕ້ອງໄດ້ໄປໂຮງໝໍ.
- ເດັກທີ່ອາຍຸໃຫຍ່ແລ້ວແລະຜູ້ໃຫຍ່ອາດບໍ່ມີອາການຮ້າຍແຮງປານໃດ, ພວກນີ້ຈະໄອເປັນຊຸດແລະ ໄອຢູ່ເປັນເວລາ ຫຼາຍ ອາທິດ ເຖິງແມ່ນວ່າຈະໄດ້ຮັບການປິ່ນປົວກໍຕາມ.

## ໂຣກນີ້ແຜ່ພາຍຢ່າງໃດ?

ໂຣກໄອໄກ່ແຜ່ພາຍໄປຫາຄົນອື່ນໂດຍທາງຝອຍນ້ຳຈາກການໄອຫຼືຈາມ. ຖ້າບໍ່ປິ່ນປົວ, ຄົນທີ່ເປັນໂຣກໄອໄກ່ອາດ ແຜ່ພາຍໂຣກ ໃຫ້ ຄົນອື່ນໄດ້ຈົນຮອດສາມອາທິດຫຼັງຈາກທີ່ເລີ້ມໄອ.

ຊ່ວງລະຍະເວລາລະຫວ່າງເລີ້ມໄດ້ຮັບເຊື້ອໂຣກຈົນເຖິງຕອນເລີ້ມເຈັບປ່ວຍນັ້ນ ຕາມປົກກະຕິຈະແມ່ນເຈັດຫາສິບມື້, ແຕ່ວ່າບາງທີກໍອາດຮອດສາມອາທິດ.

## ແມ່ນໃຜແດ່ທີ່ສ່ຽງຕໍ່ການຕິດໂຣກນີ້?

- ທຸກໆຄົນອາດເປັນໂຣກໄອໄກ່ໄດ້.
- ຄົນທີ່ຢູ່ໃນເຮືອນດຽວກັນກັບຜູ້ທີ່ເປັນໂຣກໄອໄກ່ມີແນວໂນ້ມວ່າຈະຕິດໂຣກນີ້ໄດ້.
- ການສັກຢາປ້ອງກັນສາມາດຫຼຸດຜ່ອນເປີເຊັນໃນການຕິດເຊື້ອນີ້ໄດ້ຫຼາຍທີ່ສຸດ, ແຕ່ວ່າທ່ານອາດຕິດເຊື້ອໄດ້ໃໝ່ອີກ ໃນ ເວລາຕໍ່ມາ.

## ຈະປ້ອງກັນໂຣກນີ້ໄດ້ຢ່າງໃດ?

### ພາລູກໄປສັກຢາໃຫ້ທັນກັບເວລາ

- ຢາວັກຊີນນີ້ຈະບໍ່ປ້ອງກັນໂຣກໄອໄກ່ໄດ້ຕລອດຊີວິດ, ແລະບາງເທື່ອກໍບໍ່ປ້ອງກັນໄດ້ຄົບຖ້ວນ.
- ເດັກນ້ອຍຕ້ອງໄດ້ສັກຢາເມື່ອອາຍຸໄດ້ສອງເດືອນ, ສີ່ເດືອນ ແລະ ຫົກເດືອນ.
- ຕ້ອງໄດ້ສັກຢາເພີ້ມອີກເມື່ອອາຍຸໄດ້ ສີ່ປີ ແລະ ອີກເທື່ອນຶ່ງເມື່ອອາຍຸໄດ້ 15 ປີ.
- ທ່ານສາມາດພາລູກໄປສັກຢາໄດ້ກັບທ່ານໝໍແລະຕາມເທສບານທ້ອງຖິ່ນບາງແຫ່ງ.

### ເອົາລູກອອກຫ່າງຈາກຄົນໄອ

- ແອນ້ອຍຕ້ອງໄດ້ສັກຢາປ້ອງກັນ ສອງຫຼື ສາມເທື່ອກ່ອນຢາຈະປ້ອງກັນໄດ້. ດ້ວຍເຫດນີ້, ຈຶ່ງເປັນສິ່ງສຳຄັນ ຫຼາຍ ທີ່ຕ້ອງເອົາລູກ ອອກຫ່າງຈາກຄົນທີ່ມີພະຍາດໄອເພື່ອບໍ່ໃຫ້ເຂົາເຈົ້າແຜ່ພາຍໂຣກໄອໄກ່ຫຼືພະຍາດຢ່າງອື່ນມາ ຕິດຕໍ່ໃສ່ລູກຂອງທ່ານ.

### ຈົ່ງໄປສັກຢາປ້ອງກັນຖ້າທ່ານແມ່ນຜູ້ໃຫຍ່ທີ່ຕ້ອງໄດ້ໃກ້ຊິດກັບເດັກນ້ອຍ

ມີຢາວັກຊີນສຳລັບຜູ້ໃຫຍ່. ຂໍແນະນຳດັ່ງນີ້:

- ໃຫ້ສັກຢາວັກຊີນທັງພໍ່ແລະແມ່ເມື່ອວາງແຜນເອົາລູກ, ຫຼືໃນທັນທີທີ່ເດັກນ້ອຍເກີດ
- ໃຫ້ຜູ້ໃຫຍ່ທີ່ເຮັດວຽກກ່ຽວກັບເດັກນ້ອຍສັກຢາວັກຊີນ, ໂດຍສະເພາະພະນັກງານດູແລສຸຂພາບແລະສູນຝາກເດັກ.

## ຖ້າທ່ານເປັນຜູ້ຢູ່ໃກ້ຊິດກັບຄົນທີ່ເປັນໂຣກໄອໄກ່:

- ໃຫ້ສັງເກດເບິ່ງອາການ. ຖ້າອາການປາກົດຂຶ້ນ, ໃຫ້ໄປຫາໝໍປະຈຳຄອບຄົວຂອງທ່ານ, ໃຫ້ຖືເຈັ້ຍຂໍ້ມູນໃບນີ້ໄປນຳ ແລະບອກ ໃຫ້ເພິ່ນຮູ້ວ່າທ່ານໄດ້ຕິດຕໍ່ພົວພັນກັບຄົນທີ່ເປັນໂຣກໄອໄກ່.
- ຜູ້ໃກ້ຊິດທີ່ມີຄວາມສ່ຽງສູງ (ເຊັ່ນເດັກນ້ອຍອາຍຸຕ່ຳກວ່ານຶ່ງປີ, ເດັກທີ່ຍັງບໍ່ໄດ້ສັກຢາຄົບຊຸດ, ແລະແມ່ຍິງທີ່ທ້ອງແກ່ໃກ້ຄອດ) ແລະຄົນອື່ນໆທີ່ຢູ່ຮ່ວມຫຼືເຮັດວຽກກັບຜູ້ທີ່ມີຄວາມສ່ຽງສູງ ອາດຈຳເປັນຕ້ອງໄດ້ກິນຢາປະຕິຊີວະນະ (antibiotics)ເພື່ອປ້ອງກັນຕົນເອງ ຈາກການຕິດເຊື້ອ.

**ຖ້າທ່ານເປັນໂຣກໄອໄກ່:**

- ໃຫ້ໄປປິ່ນປົວແຕ່ຕົ້ນໆໃນລະຫວ່າງຕິດເຊື້ອ, ໃຫ້ຫຼີກເວັ້ນພົບປະກັບຄົນອື່ນ ແລະ ຢູ່ຫ່າງຈາກເດັກນ້ອຍ, ຕົວຢ່າງ ທີ່ສູນດູແລເດັກ, ໂຮງຮຽນອະນຸບານ ແລະ ໂຮງຮຽນ.

## ຈະກວດຫາໂຣກນີ້ໄດ້ຢ່າງໃດ?

ຖ້າທ່ານໝໍຄິດວ່າຄົນຜູ້ນຶ່ງເປັນໂຣກໄອໄກ່, ເພິ່ນອາດຈະຕ້ອຍເອົາຕົວຢ່າງດ້ານໃນຂອງຮູດັງ, ຫຼືທຳການກວດເລືອດເພື່ອຢັ້ງຢືນ ການກວດຫາພະຍາດ.

## ຈະປິ່ນປົວໂຣກນີ້ຢ່າງໃດ?

ຢາປະຕິຊີວະນະຊະນິດພິເສດ - ຕາມປົກກະຕິຈະໃຊ້ຢາຢ່າງໃດຢ່າງນຶ່ງຊຶ່ງມີ azithromycin, erythromycin ຫຼື clarithromycin ເພື່ອທຳການປິ່ນປົວໂຣກໄອໄກ່. ຢາປະຕິຊີວະນະເຫຼົ່ານີ້ສາມາດປ້ອງກັນການແຜ່ຜາຍແມ່ພະຍາດໃຫ້ຄົນອື່ນ.

ເຖິງແມ່ນວ່າ ຈະ ປິ່ນປົວແລ້ວກໍຕາມ ສ່ວນຫຼາຍແລ້ວ ກໍຍັງໄອຢູ່ເປັນເວລາຫຼາຍອາທິດ.

## ຜແນກສາທາຣະນະສຸກມີທ່າທີຢ່າງໃດຕໍ່ໂຣກນີ້?

ທ່ານໝໍແລະຫ້ອງທົດລອງຕ້ອງລາຍງານກໍຣະນີຂອງໂຣກໄອໄກ່ແບບເກັບເປັນຄວາມລັບຂອງແຕ່ລະກໍຣະນີ ໃຫ້ຜແນກ ສາທາຣະນະ ສຸກຊາບ. ພະນັກງານຂອງຜແນກສາທາຣະນະສຸກສາມາດໃຫ້ຄຳແນະນຳ ເຖິງວິທີທີ່ດີສຸດເພື່ອຢຸດຢັ້ງການແຜ່ຜາຍເຊື້ອໂຣກ.

ເດັກນ້ອຍທີ່ຕິດເຊື້ອໂຣກນີ້ ຈະຖືກຈຳກັດບໍ່ໃຫ້ໄປໂຮງຮຽນອະນຸບານຫຼືໂຮງຮຽນ. ຜູ້ພົວພັນທີ່ບໍ່ໄດ້ສັກຢາ ປ້ອງກັນອາດຖືກສັ່ງໃຫ້ ຫຼີກເວັ້ນສູນດູແລເດັກນອກຈາກວ່າເຂົາເຈົ້າໄດ້ກິນຢາປະຕິຊີວະນະຊະນິດພິເສດ.

## ຣາຍລະອຽດເພີ້ມເຕີມ - ຜແນກສາທາຣະນະສຸກແຫ່ງຣັດ NSW



**1300 066 055** [www.health.nsw.gov.au](http://www.health.nsw.gov.au)